ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

LAO WORLD
PUBLIC COMPANY
ບໍລິສັດລາວເວີ້ນ ມະຫາຊົນ
ອາຄານລາວໄອເຕັກ, ຖະນົນກຳແພງເມືອງ
ເມືອງໄຊເສດຖາ, ນະຄອນຫລວງວຽງຈັນ
ໂທ 021 41 5477, ແຟັກ 021 41 5409

ເລກທີ 363-/23-/ລວມຊ
ວັນທີ 15 MAY 2023

ບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2022
ຂອງບໍລິສັດ ລາວເວີ້ນ ມະຫາຊົນ

ໃນວັນທີ 27/04/2023 ເວລາ 15:00 ໂມງ, ໄດ້ຈັດກອງປະຊຸມສາມັນ ຜູ້ຖືຮຸ້ນ ປະຈຳປີ 2022 ຂອງບໍລິສັດ ລາວ ເວີ້ນ ມະຫາຊົນ ທີ່ຫ້ອງປະຊຸມ B2, ອາຄານຫລັງເກົ່າ ລາວ-ໄອເຕັກ, ບ້ານ ໂພນທັນ, ເມືອງ ໄຊເສດຖາ, ນະຄອນຫລວງວຽງ ຈັນ ໂດຍການເປັນປະທານກອງປະຊຸມຂອງ ທ່ານ ທັດນະຄອນ ທຳມະວົງ. ກອງປະຊຸມໄດ້ມີຜູ້ຖືຮຸ້ນເຂົ້າຮ່ວມປະຊຸມທັງໝົດ **10** ທ່ານ ຖືຮຸ້ນລວມທັງໝົດ ຈຳນວນ **38.993.411** ຮຸ້ນ ເທົ່າກັບ **99** ສ່ວນຮ້ອຍຂອງຈຳນວນຮຸ້ນທັງໝົດຂອງບໍລິສັດ, ຖືວ່າ ຄົບອົງປະຊຸມຕາມກົດໝາຍ ແລະ ລະບຽບການຂອງບໍລິສັດ. ສຳລັບຮຸ້ນທີ່ບໍ່ໄດ້ເຂົ້າຮ່ວມກອງປະຊຸມ ມີຈຳນວນ **567.498** ຮຸ້ນ ເທົ່າກັບ **1** ສ່ວນຮ້ອຍຂອງຈຳນວນຮຸ້ນທັງໝົດຂອງບໍລິສັດ (ລາຍລະອຽດເອກະສານຄັດຕິດມາພ້ອມນີ້).

ສະພາບໍລິຫານທີ່ເຂົ້າຮ່ວມປະກອບມີ:

1) ທ່ານ ທັດນະຄອນ ທຳມະວົງ ປະທານສະພາບໍລິຫານ;
2) ທ່ານ ນາງ ສີພອນເຄົ່າ ດວງດາລາ ຮອງປະທານສະພາບໍລິຫານ, ຜູ້ອຳນວຍການໃຫຍ່;
3) ທ່ານ ສີບຸນທຳ ສີບຸນມີ ສະມາຊິກສະພາບໍລິຫານ;
4) ທ່ານ ຣສ. ເດດພູວັງ ມຸລຣັຕນ໌ ສະມາຊິກສະພາບໍລິຫານ, ກຳມະການອິດສະຫຼະ;
5) ທ່ານ ສີຫາວັດ ແສງດວງຈັນ ສະມາຊິກສະພາບໍລິຫານ;

ນອກຈາກນັ້ນ ກໍ່ຍັງມີ ຄະນະຜູ້ຕ່າງໜ້າ ແລະ ແຂກຖືກເຊີນ ຈາກອົງການ ແລະ ບໍລິສັດທີ່ກ່ຽວຂ້ອງຈຳນວນໜຶ່ງ ເຊັ່ນ:

- ຜູ້ຕ່າງໜ້າຈາກສຳນັກງານຄະນະກຳມະການຄຸ້ມຄອງຫລັກຊັບ.
- ຜູ້ຕ່າງໜ້າຈາກຕະຫລາດຫລັກຊັບລາວ.

ປະທານກອງປະຊຸມ ທ່ານ ທັດນະຄອນ ທຳມະວົງ ປະທານສະພາບໍລິຫານ ໄດ້ກ່າວເປີດກອງປະຊຸມຢ່າງ ເປັນທາງການ. ຫລັງຈາກນັ້ນ ທ່ານ ນາງ ແອນນາ ສ້ອຍນາວາ ໄດ້ຂຶ້ນກ່າວແນະນຳ ລະບຽບໃນການລົງຄະແນນສຽງ ເຊິ່ງມີລາຍລະອຽດດັ່ງ:

1. ຜູ້ເຂົ້າຮ່ວມກອງປະຊຸມ ຈະໄດ້ຮັບບັດລົງຄະແນນສຽງໃນທຸກໆວາລະ ທີ່ຕ້ອງການໃຫ້ມີການລົງຄະແນນສຽງໃນເວລາລົງທະບຽນເຂົ້າຮ່ວມກອງປະຊຸມ. ການລົງຄະແນນສຽງໂດຍຜູ້ຕາງໜ້າ ຊຶ່ງຜູ້ຖືຮຸ້ນເປັນຜູ້ມອບໝາຍສິດ ແລະ ໄດ້ລະບຸຢ່າງຈະແຈ້ງແລ້ວກ່ຽວກັບການລົງຄະແນນໃນແຕ່ລະວາລະ ບໍລິສັດລາວເວັນມະຫາຊົນ ຈະບັນທຶກການລົງຄະແນນສຽງໃນເວລາລົງທະບຽນ ໂດຍທີ່ຜູ້ຕາງໜ້າບໍ່ຕ້ອງລົງຄະແນນສຽງອີກ.
2. ກອງປະຊຸມ ຈະເຊີນພຽງແຕ່ຜູ້ຖືຮຸ້ນທ່ານໃດທີ່ບໍ່ເຫັນດີ ຕໍ່ວາລະໃດໜຶ່ງ ຫລື ບັນຫາທີ່ກອງປະຊຸມໄດ້ນຳສະເໜີເທົ່ານັ້ນ ລົງຄະແນນສຽງ (ໝາຍຄວາມວ່າຜູ້ຖືຮຸ້ນທ່ານໃດທີ່ເຫັນດີ ຕໍ່ວາລະດັ່ງກ່າວ ຫລື ການແຕ່ງຕັ້ງດັ່ງກ່າວ ກໍ່ບໍ່ຈຳເປັນຕ້ອງລົງຄະແນນສຽງໃດໆ).
3. ໃນການລົງຄະແນນສຽງ ຂໍໃຫ້ທ່ານປະກອບຂໍ້ມູນໃສ່ບັດລົງຄະແນນສຽງທີ່ໄດ້ແຈກຢາຍໃຫ້, ໃນນັ້ນຕ້ອງລະບຸຢ່າງຈະແຈ້ງກ່ຽວກັບຊື່ ແລະ ນາມສະກຸນຂອງທ່ານ, ຈຳນວນຮຸ້ນຂອງ ບໍລິສັດລາວເວັນມະຫາຊົນ ທີ່ທ່ານຖືຢູ່ ແລະ ໃຫ້ໝາຍຕີນກາໃສ່ຫ້ອງບໍ່ເຫັນດີ.
4. ຫຼັງຈາກປະກອບຂໍ້ມູນຮຽບຮ້ອຍແລ້ວ ຂໍໃຫ້ທ່ານຍົກບັດດັ່ງກ່າວຂຶ້ນ ເພື່ອໃຫ້ຄະນະຮັບຜິດຊອບເກັບເອົາ ແລະ ຮວບຮວມຄະແນນສຽງ.
5. ທ່ານຈະໄດ້ຮັບແຈ້ງກ່ຽວກັບຜົນການນັບຄະແນນຢູ່ໃນທີ່ປະຊຸມເລີຍ ໂດຍການນັບຄະແນນສຽງຈະຖືເອົາໜຶ່ງຮຸ້ນເທົ່າກັບໜຶ່ງຄະແນນສຽງ
6. ການລົງຄະແນນສຽງບໍ່ເຫັນດີຈະມີຜົນສັກສິດກໍ່ຕໍ່ເມື່ອ ມີຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນຮຸ້ນຂອງ ບໍລິສັດລາວເວັນມະຫາຊົນທັງໝົດໃນທີ່ປະຊຸມ ລົງຄະແນນບໍ່ເຫັນດີ ດັ່ງທີ່ໄດ້ກຳນົດໄວ້ໃນມາດຕາ 143 ຂອງກົດໝາຍວ່າດ້ວຍວິສະຫະກິດ.

ໝາຍເຫດ

1. ຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າ ທີ່ບໍ່ໄດ້ລົງທະບຽນເຂົ້າປະຊຸມ ຈະບໍ່ມີສິດໃນການລົງຄະແນນສຽງ.
2. ທຸກບັດລົງຄະແນນສຽງບໍ່ເຫັນດີຕໍ່ວາລະໃດໜຶ່ງ ທີ່ຖືກສົ່ງໃຫ້ທີ່ປະຊຸມຫຼັງຈາກທີ່ກອງປະຊຸມໄດ້ປະກາດຜົນການລົງຄະແນນຂອງວາລະນັ້ນແລ້ວ, ຈະຖືວ່າເປັນບັດລົງຄະແນນສຽງທີ່ໃຊ້ບໍ່ໄດ້.

ຫຼັງຈາກນັ້ນກອງປະຊຸມໄດ້ດຳເນີນລາຍງານຕາມແຕ່ລະວາລະຂອງກອງປະຊຸມ ແລະ ຂໍມະຕິຈາກກອງປະຊຸມ ໂດຍແມ່ນປະທານກອງປະຊຸມ ທ່ານ ທັດນະຄອນ ທຳມະວົງ ເປັນຜູ້ດຳເນີນການ ເຊິ່ງມີລາຍລະອຽດດັ່ງລຸ່ມນີ້:

1. **ວາລະທີ 1:** ລາຍງານ ຜົນໄດ້ຮັບ ຂອງມະຕິຕົກລົງ ຂອງກອງປະຊຸມສາມັນຜູ້ຖືຮຸ້ນ ຄັ້ງກ່ອນ ເພື່ອເປັນຂໍ້ມູນເພີ່ມຕື່ມ.

- ວາລະນີ້ແມ່ນບໍ່ຕ້ອງການໃຫ້ມີການລົງຄະແນນສຽງ ເພາະເປັນການລາຍງານການປະຕິບັດມະຕິໃນກອງປະຊຸມຄັ້ງກ່ອນ.

2. **ວາລະທີ 2:** ພິຈາລະນາ ແລະ ຮັບຮອງເອົາ ປຶດບັນທຶກ ຂອງກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2021.

- **ການຖາມ-ຕອບ:**

  ບໍ່ມີຜູ້ເຂົ້າຮ່ວມກອງປະຊຸມທ່ານໃດ ມີຄຳເຫັນເພີ່ມເຕີມຕໍ່ວາລະນີ້.

- **ມະຕິ:** ກອງປະຊຸມໄດ້ພິຈາລະນາ ແລະ ເຫັນດີດ້ວຍຄະແນນສຽງທັງໝົດຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມຄື:
  - ເຫັນດີຈຳນວນ 38.993.411 ສຽງ ເທົ່າກັບ 100%
  - ບໍ່ເຫັນດີຈຳນວນ 0 ສຽງ ເທົ່າກັບ 0%

3. **ວາລະທີ 3:** ພິຈາລະນາ ແລະ ຮັບຮອງເອົາ ບົດລາຍງານການເງິນລວມປະຈຳປີ 2022 ທີ່ສິ້ນສຸດລົງໃນວັນທີ 31 ທັນວາ 2022, ເຊິ່ງເປັນ ບົດລາຍງານທີ່ໄດ້ຮັບການກວດສອບຈາກ ບໍລິສັດກວດສອບພາຍນອກ ກໍ່ຄືບໍລິສັດ ເອີນແອນຢັ້ງລາວ ຈຳກັດ.

- **ການຖາມ-ຕອບ:**

  ບໍ່ມີຜູ້ເຂົ້າຮ່ວມກອງປະຊຸມທ່ານໃດ ມີຄຳເຫັນເພີ່ມເຕີມຕໍ່ວາລະນີ້

- **ມະຕິ:** ກອງປະຊຸມໄດ້ພິຈາລະນາ ແລະ ເຫັນດີດ້ວຍຄະແນນສຽງທັງໝົດຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມຄື:
  - ເຫັນດີຈຳນວນ 38.993.411 ສຽງ ເທົ່າກັບ 100%
  - ບໍ່ເຫັນດີຈຳນວນ 0 ສຽງ ເທົ່າກັບ 0%

4. **ວາລະທີ 4:** ພິຈາລະນາ ແລະ ຮັບຮອງເອົາການຈັດສັນກຳໄລສຸດທິ ປະຈຳປີ 2022 ເຂົ້າຄັງສຳຮອງຕ່າງໆ ທີ່ກຳນົດໄວ້ໃນກົດໝາຍ ແລະ ງົບຈ່າຍເງິນປັນຜົນ.

- **ການຖາມ-ຕອບ:**

  ບໍ່ມີຜູ້ເຂົ້າຮ່ວມກອງປະຊຸມທ່ານໃດ ມີຄຳເຫັນເພີ່ມເຕີມຕໍ່ວາລະນີ້

- **ມະຕິ:** ກອງປະຊຸມໄດ້ພິຈາລະນາ ແລະ ເຫັນດີດ້ວຍຄະແນນສຽງທັງໝົດຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມຄື:
  - ເຫັນດີຈຳນວນ 38.993.411 ສຽງ ເທົ່າກັບ 100%
  - ບໍ່ເຫັນດີຈຳນວນ 0 ສຽງ ເທົ່າກັບ 0%

5. **ວາລະທີ 5:** ພິຈາລະນາ ແລະ ຮັບຮອງເອົາການລາຍງານຜົນການດຳເນີນທຸລະກິດປະຈຳປີ 2022 ແລະ ພິຈາລະນາ ແລະ ຮັບຮອງເອົາແຜນປະຕິບັດງານປະຈຳປີ 2023 ຂອງບໍລິສັດ ລາວເວີນມະຫາຊົນ.

- **ການຖາມ-ຕອບ:**

ຄຳຖາມ: ທ່ານ ມິດໄຊ ເຢືองดอง ตางໜ້າໃຫ້ ບໍລິສັດ ສຸວັນນີ ການຄ້າ ສາຂາ ໂພນຕ້ອງສະຫວາດ ໄນນາມຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມມີຄຳຖາມລຸ່ມນີ້:

1. ນອກຈາກຜົນກະທົບຈາກປັດໄຈພາຍນອກແລ້ວ ທີ່ເຮັດໃຫ້ຂາດທຶນໃນປີ 2022 ຍັງມີປັດໃຈພາຍໃນອີກບໍ? ທີ່ເປັນສາເຫດຕໍ່ການຂາດທຶນດັ່ງກ່າວ.
2. ຍ້ອນສາເຫດໃດຈຶ່ງຂາດທຶນຈາກອັດຕາແລກປ່ຽນ?

ຄຳຕອບ ຂໍ້ 1: ປະທານກອງປະຊຸມຕອບຄຳຖາມ: ປັດໃຈພາຍໃນທີ່ອາດຈະກໍ່ໃຫ້ເກີດການຂາດທຶນຄື:

1. ບໍ່ສາມາດປະຕິບັດຍອດຂາຍໄດ້ຕາມເປົ້າທີ່ວາງໄວ
2. ການເກັບລາຍຮັບທີ່ຜ່ານມາອາດບໍ່ໄດ້ຕາມເປົ້າໝາຍ ເນື່ອງຈາກເປັນຜົນຈາກຍຸດຕະສາດຂອງຜູ່ບໍລິຫານທີ່ຜ່ານມາ.
3. ການຈັດຕັ້ງກົດລະບຽບພາຍໃນຍັງບໍ່ທັນເຂັ້ມງວດເທົ່າທີ່ຄວນ

ຄຳຕອບ ຂໍ້ 2: ການຂາດທຶນຈາກອັດຕາແລກປ່ຽນ ຂອງ ບໍລິສັດ ລາວເວີນ ມະຫາຊົນ ເນື່ອງຈາກບໍລິສັດ ມີໜີ້ຄ້າງຈ່າຍຄ່າກໍ່ສ້າງຕຶກອາຄານ ມາແຕ່ເລີ່ມຕົ້ນ ເຊິ່ງສັນຍາ ແມ່ນ ເປັນສະກຸນເງິນຕຣາຕ່າງປະເທດ ສົມທົບກັບອັດຕາເງິນເຟີ້ຂອງປະເທດເຮົາ ເລີຍເຮັດໃຫ້ ຍອດໜີ້ສິນດັ່ງກ່າວເພີ່ມຫຼາຍເມື່ອຕີມູນຄ່າມາທາງດ້ານຫລັກການບັນຊີ.

- **ມະຕິ:** ກອງປະຊຸມໄດ້ພິຈາລະນາ ແລະ ເຫັນດີດ້ວຍຄະແນນສຽງທັງໝົດຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມຄື:
  - ເຫັນດີຈຳນວນ 38.993.411 ສຽງ ເທົ່າກັບ 100%
  - ບໍ່ເຫັນດີຈຳນວນ 0 ສຽງ ເທົ່າກັບ 0%

6. **ວາລະທີ 6**: ພິຈາລະນາ ແລະ ແຕ່ງຕັ້ງ ບໍລິສັດກວດສອບບັນຊີພາຍນອກ ເຊິ່ງແມ່ນບໍລິສັດ PWC ແລະ ກຳນົດ ຄ່າຈ້າງ ຜູ້ກວດສອບພາຍນອກ ປະຈຳປີ 2023.

- **ການຖາມ-ຕອບ:**
  ບໍ່ມີຜູ້ເຂົ້າຮ່ວມກອງປະຊຸມທ່ານໃດ ມີຄຳເຫັນເພີ່ມເຕີມຕໍ່ວາລະນີ້.
- **ມະຕິ**: ກອງປະຊຸມໄດ້ພິຈາລະນາ ແລະ ເຫັນດີດ້ວຍຄະແນນສຽງທັງໝົດຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມຄື:
  - ເຫັນດີຈຳນວນ 38.993.411 ສຽງ ເທົ່າກັບ 100%
  - ບໍ່ເຫັນດີຈຳນວນ 0 ສຽງ ເທົ່າກັບ 0%

7. **ວາລະທີ 7**: ພິຈາລະນາ ແລະ ຮັບຮອງເອົາການຂຶ້ນເງິນເດືອນໃຫ້ກັບພະນັກງານບໍລິສັດລາວເວີນມະຫາຊົນທີ່ມີຂຶ້ນຕ່ຳແໜ່ງຕັ້ງແຕ່ລະດັບຫົວໜ້າພະແນກລົງໄປ.

- **ການຖາມ-ຕອບ:**
  ບໍ່ມີຜູ້ເຂົ້າຮ່ວມກອງປະຊຸມທ່ານໃດ ມີຄຳເຫັນເພີ່ມເຕີມຕໍ່ວາລະນີ້.
- **ມະຕິ**: ກອງປະຊຸມໄດ້ພິຈາລະນາ ແລະ ເຫັນດີດ້ວຍຄະແນນສຽງທັງໝົດຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມຄື:
  - ເຫັນດີຈຳນວນ 38.993.411 ສຽງ ເທົ່າກັບ 100%
  - ບໍ່ເຫັນດີຈຳນວນ 0 ສຽງ ເທົ່າກັບ 0%

8. **ວາລະທີ 8**: ພິຈາລະນາ ແລະ ຮັບຮອງເອົາ ການຖອນຈົດທະບຽນຮຸ້ນຂອງບໍລິສັດອອກຈາກການເປັນຮຸ້ນຈົດທະບຽນໃນຕະຫຼາດຫຼັກຊັບລາວ.

- **ການຖາມ-ຕອບ:**
  ຄຳຖາມ: Mr. Kraiwal Kadavanich ໃນນາມຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມມີຄຳຖາມລຸ່ມນີ້:
  1. ຜູ້ຖືຮຸ້ນລາຍໃຫຍ່ຕ້ອງການຊື້ຮຸ້ນໄປເປັນຂອງ ບໍລິສັດຕົນເອງໝົດເລີຍບໍ? ຫຼື ຮຸ້ນທີ່ຖືຢູ່ 91.49% ບໍ່ຄິດທີ່ຈະຊື້ເພີ່ມ ຂອງຮຸ້ນ ບໍລິສັດ ລາວເວີນ ທັງໝົດ?
  2. ໃນພາລະບົດບາດ ໃນການສະເໜີອອກຈາກຕະຫຼາດຫຼັກຊັບແບບສະໝັກໃຈ (ຕ້ອງສະເໜີ ຫຼື ບໍ່ສະເໜີກໍໄດ້?)
  3. ຕາມເງື່ອນໄຂອອກຈາກຕະຫຼາດຫຼັກຊັບ ຮຸ້ນຂອງ ຜູ້ຖືຮຸ້ນລາຍໃຫຍ່ ແລະ ບຸກຄົນທີ່ກ່ຽວພັນ ກວມເອົາ 95.18% ແລ້ວ, ເຊິ່ງເຫັນວ່າຄົບຕາມເງື່ອນໄຂຂອງການສະເໜີອອກຈາກ ບໍລິສັດຈົດທະບຽນ, ຈຳເປັນຕ້ອງຊື້ຮຸ້ນອີກບໍ?
  4. ອີງຕາມຈຸດປະສົງຂອງການສະເໜີອອກຈາກຕະຫຼາດຫຼັກຊັບ ກໍເພື່ອຕ້ອງການປັບປຸງແກ້ໄຂລະບົບການບໍລິຫານຈັດການ ໃນອານາຄົດ, ສ່ວນຜູ້ຖືຮຸ້ນລາຍຍ່ອຍຂອງ ບໍລິສັດ ລາວເວີນ ມະຫາຊົນ ທີ່ບໍ່ຕ້ອງການຂາຍຮຸ້ນ ໃຫ້ແກ່ຜູ້ຖືຮຸ້ນລາຍໃຫຍ່ ເພື່ອຕ້ອງການກ້າວໄປພ້ອມກັບບໍລິສັດ ໃນອະນາຄົດແມ່ນສາມາດເຮັດໄດ້ບໍ?

  ຄຳຕອບ ຂໍ້ 1: ຜູ້ຖືຮຸ້ນລາຍໃຫຍ່ຕ້ອງການຊື້ຮຸ້ນຈາກຜູ້ຖືຮຸ້ນລາຍຍ່ອຍແມ່ນອີງຕາມ ລະບຽບ ຂັ້ນຕອນ ຂອງ ຕລຊລ ໃນຂັ້ນຕອນການຂໍຖອນຈົດທະບຽນຮຸ້ນ.

  ຄຳຕອບ ຂໍ້ 2: ໃນພາລະບົດບາດ ໃນການສະເໜີອອກຈາກຕະຫຼາດຫຼັກຊັບແບບສະໝັກໃຈ ຕ້ອງໄດ້ສະເໜີ ຂໍການພິຈາລະນາຈາກ ຕລຊລ ຕາມລະບຽບ ເງື່ອນໄຂຂອງ ຕະຫລາດຫລັກຊັບລາວ ພາຍໃຕ້ການຄຸ້ມຄອງຂອງ ສຳນັກງານຄຸ້ມຄອງຕະຫລາດຫລັກຊັບ ລາວ.

  ຄຳຕອບ ຂໍ້ 3: ແມ່ນຕ້ອງອີງຕາມລະບຽບຂັ້ນຕອນຂອງ ຕລຊລ ລາວ.

  ຄຳຕອບ ຂໍ້ 4: ອີງຕາມຈຸດປະສົງຂອງການສະເໜີອອກຈາກຕະຫຼາດຫຼັກຊັບ ກໍເພື່ອຕ້ອງການປັບປຸງແກ້ໄຂລະບົບການບໍລິຫານຈັດການ ໃນອານາຄົດ, ສ່ວນຜູ້ຖືຮຸ້ນລາຍຍ່ອຍຂອງ ບໍລິສັດ ລາວເວີນ ມະຫາຊົນ ທີ່ບໍ່ຕ້ອງການຂາຍ

ຮຸ້ນ ໃຫ້ແກ່ຜູ້ຖືຮຸ້ນລາຍໃຫຍ່ ເພື່ອຕ້ອງການກ້າວໄປພ້ອມກັບບໍລິສັດ ໃນອະນາຄົດແມ່ນສາມາດເຮັດໄດ້ ແຕ່ຕ້ອງຢູ່ໃນເງື່ອນໄຂ ແລະ ການເຫັນດີຂອງ ຕລຊລ.

- ມະຕິ: ກອງປະຊຸມໄດ້ພິຈາລະນາ ແລະ ເຫັນດີດ້ວຍຄະແນນສຽງທັງໝົດຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມຄື:
  - ເຫັນດີຈຳນວນ 1.353.902 ສຽງ ເທົ່າກັບ 100%
  - ບໍ່ເຫັນດີຈຳນວນ 0 ສຽງ ເທົ່າກັບ 0%

ກອງປະຊຸມໄດ້ດຳເນີນໄປຈົນຄົບທຸກວາລະ ແລະ ບໍ່ມີຄຳເຫັນໃດທີ່ຈະພິຈາລະນາເພີ່ມເຕີມ. ປະທານກອງປະຊຸມ ທ່ານ ທັດມະຄອນ ທຳມະວົງ ໄດ້ກ່າວປິດກອງປະຊຸມລົງຢ່າງເປັນທາງການ ໃນເວລາ 16:00 ໂມງ ຂອງວັນດຽວກັນ.

ປະທານ ກອງປະຊຸມ

ທ່ານ ທັດມະຄອນ ທຳມະວົງ

ຜູ້ບັນທຶກກອງປະຊຸມ

ນາງ ບຸນລຳ ປາລາວົງວຽງຄຳ